ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

## ທະນາຄານແຫ່ງ ສປປ ລາວ ສຳເລັດການເຂົ້າຮ່ວມ ກອງປະຊຸມລະດັບລັດຖະມົນຕີການເງິນ ແລະ ຜູ້ວ່າການ ທະນາຄານກາງອາຊຽນ+3 ຄັ້ງທີ 29 ແລະ ກອງປະຊຸມປະຈຳປີຂອງ ສະພາຜູ້ວ່າການ ທະນາຄານພັດທະນາອາຊີ ຄັ້ງທີ 59 ໃນລະຫວ່າງວັນທີ 03-06 ພຶດສະພາ 2026, ທີ່ເມືອງ ຊາມາກັນ, ປະເທດ ອຸດສະເບກິດສະຖານ.




ໃນລະຫວ່າງວັນທີ 03-06 ພຶດສະພາ 2026, ການນຳຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ທ່ານ ສຸລິສັກ ທຳນຸວົງ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານ ກາງ ອາຊຽນ+3 ຄັ້ງທີ 29 ພາຍໃຕ້ການເປັນປະທານຮ່ວມລະຫວ່າງ ກະຊວງການເງິນ ແລະ ທະນາຄານກາງ ປະເທດ ຟິລິບປິນ ແລະ ຍີ່ປຸ່ນ ໂດຍມີການນຳຂັ້ນສູງຈາກ ກະຊວງການເງິນ ແລະ ທະນາຄານກາງ ບັນດາປະເທດ ອາຊຽນ+3, ກອງເລຂາອາຊຽນ ພ້ອມດ້ວຍຕາງໜ້າ ຈາກ ອົງການການເງິນສາກົນ ເຊັ່ນ: ທະນາຄານພັດທະນາອາຊີ, ກອງທຶນການເງິນສາກົນ ແລະ ອົງການຕິດຕາມເສດຖະກິດມະຫາພາກ ອາຊຽນ+3 ເຂົ້າຮ່ວມ. ຈຸດປະສົງຂອງກອງປະຊຸມດັ່ງກ່າວ ແມ່ນເພື່ອເປັນເວທີໃຫ້ການນຳຂັ້ນສູງຂອງຂະແໜງການເງິນ-ທະນາຄານ ພົບປະແລກປ່ຽນທັດສະນະກ່ຽວກັບສະພາບເສດຖະກິດມະຫາພາກຂອງພາກພື້ນ ແລະ ສາກົນ ຮ່ວມກັບບັນດາອົງການການເງິນສາກົນ ເພື່ອກຳນົດນະໂຍບາຍການເງິນ-ເງິນຕາ ໃຫ້ແທດເໝາະກັບສະພາບເງື່ອນໄຂເສດຖະກິດໃນແຕ່ລະໄລຍະ. ພ້ອມດຽວກັນນີ້, ກອງປະຊຸມ ກໍ່ໄດ້ປຶກສາຫາລືເປັນເອກະພາບກັນກ່ຽວກັບຫຼາຍບັນຫາສຳຄັນບູລິມະສິດ ແລະ ຮັບຮອງທິດທາງແຜນການໃນຕໍ່ໜ້າ ເພື່ອສ້າງຄວາມ ເຂັ້ມແຂງໃຫ້ແກ່ວຽກງານຮ່ວມມືທາງດ້ານການເງິນ ພາຍໃຕ້ຂອບວຽກງານອາຊຽນ+3 ໂດຍສະເພາະແມ່ນການເສີມຂະຫຍາຍການຮ່ວມມື ທາງດ້ານເສດຖະກິດການເງິນໃນພາກພື້ນ ຕິດພັນວຽກງານການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່, ວຽກງານອົງການຕິດຕາມ ສະພາບເສດຖະກິດມະຫາພາກອາຊຽນ+3, ວຽກງານພັດທະນາຕະຫຼາດພັນທະບັດອາຊີ, ວຽກງານການສະໜອງທຶນເພື່ອປ້ອງກັນ ຄວາມສ່ຽງທາງດ້ານໄພພິບັດ ແລະ ວຽກງານບັນດາຂໍ້ລິເລີ່ມໃນຕໍ່ໜ້າຂອງ ອາຊຽນ+3 ໂດຍສະເພາະແມ່ນການຊຳລະຂ້າມແດນ ທາງດິຈິຕອນ ແລະ ເວທີສົນທະນາສະເພາະທະນາຄານກາງ ຊຶ່ງກອງປະຊຸມປີນີ້ໄດ້ກຳນົດຫົວຂໍ້ການສົນທະນາກ່ຽວກັບ "ການເຊື່ອມໂຍງ ການຊຳລະເງິນຂ້າມແດນ". ກອງປະຊຸມຄັ້ງນີ້, ໄດ້ດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ ແລະ ປະສົບຜົນສຳເລັດຢ່າງຈົບງາມ ຊຶ່ງບັນດາ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ເຫັນດີເປັນເອກະພາບຮ່ວມກັນ ແລະ ສືບຕໍ່ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນວຽກບູລິມະສິດ ພາຍໃຕ້ຂອບວຽກ ອາຊຽນ+3 ເພື່ອແນໃສ່ສ້າງຄວາມເຂັ້ມແຂງ ແລະ ເປັນຕາໜ່າງປ້ອງກັນການເກີດວິກິດການທາງການເງິນໃຫ້ພາກພື້ນ ອາຊຽນ+3 ຢ່າງມີປະສິດພາບ.

ຄຽງຄູ່ກັນນັ້ນ, ການນຳຂອງ ທຫລ ພ້ອມດ້ວຍຄະນະ ກໍໄດ້ເຂົ້າຮ່ວມກອງປະຊຸມປະຈຳປີຂອງ ສະພາຜູ້ວ່າການ ADB ຄັ້ງທີ 59 ປະຈຳປີ 2026 ພາຍໃຕ້ຫົວຂໍ້: "Crossroads of Progress: Advancing the Region's Connected Future". ກອງ

ປະຊຸມດັ່ງກ່າວ ໄດ້ຈັດຂຶ້ນເປັນປະຈຳທຸກໆປີ ເພື່ອເປັນເວທີ ແລະ ກາລະໂອກາດທີ່ດີໃຫ້ແກ່ບັນດາການນຳຂັ້ນສູງຂອງ ບັນດາປະເທດສະມາຊິກ, ຜູ້ຊ່ຽວຊານ ແລະ ພາກສ່ວນກ່ຽວຂ້ອງ ໃນການເຂົ້າຮ່ວມແລກປ່ຽນຄວາມຮູ້, ປະສົບການ ແລະ ຮ່ວມກັນ ຍົກສູງການຮ່ວມມືເພື່ອການພັດທະນາແບບຍືນຍົງ. ໃນກອງປະຊຸມຄັ້ງນີ້, ຜູ້ແທນຈາກຫຼາຍປະເທດ ໄດ້ປຶກສາຫາລືຮ່ວມກັນກ່ຽວກັບ ຫຼາຍບັນຫາສຳຄັນ ຕິດພັນບັນຫາຄວາມທ້າທາຍຕ່າງໆທີ່ເກີດຂຶ້ນໃນພາກພື້ນ ແລະ ສາກົນພ້ອມທັງເປັນການຮັດແໜ້ນການພົວພັນຮ່ວມມື ລະຫວ່າງກັນຂອງບັນດາປະເທດສະມາຊິກໃນພາກພື້ນອາຊີ-ປາຊີຟິກ ໂດຍເນັ້ນໃສ່ການພັດທະນາ ແລະ ການຂະຫຍາຍຕົວຢ່າງຍືນຍົງ ໃນອະນາຄົດ.

ຕິດພັນກັບວຽກງານຂອງຂະແໜງການເງິນ ແລະ ການທະນາຄານ, ກອງປະຊຸມໄດ້ລົງເລິກການປຶກສາຫາລື ແລະ ຈັດເວທີແລກປ່ຽນຄວາມຮູ້ໃນຫຼາຍບັນຫາຕິດພັນກັບ 03 ວຽກງານບູລິມະສິດ ຄື: 1) ການເຊື່ອມໂຍງເພື່ອການພັດທະນາທີ່ແນໃສ່ການພັດທະນາດ້ານໂຄງສ້າງພື້ນຖານການຊຳລະຂ້າມຊາຍແດນ, ລະບົບພະລັງງານ, ການຄ້າ ແລະ ການປະສານງານທີ່ເປີດໂອກາດ ໃຫ້ເກີດການຂະຫຍາຍຕົວຮ່ວມກັນ; 2) ຂໍ້ມູນເພື່ອການພັດທະນາທີ່ເນັ້ນໃສ່ການພັດທະນາເທັກໂນໂລຊີດີຈິຕອນ ແລະ ວິທີແກ້ໄຂ ບັນຫາທີ່ຂັບເຄື່ອນດ້ວຍຂໍ້ມູນ (data-driven solutions) ເພື່ອຍົກລະດັບການຕັດສິນໃຈ, ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ການສົ່ງມອບຜົນໄດ້ຮັບຈາກການພັດທະນາທີ່ດີກວ່າ ພ້ອມກັບການບໍລິຫານຄວາມສ່ຽງຈາກການຂ້າມຜ່ານສູ່ການຫັນເປັນດິຈິຕອນ ດ້ວຍຄວາມຮັບຜິດຊອບ; ແລະ 3) ການລະດົມທຶນເພື່ອການພັດທະນາທີ່ເນັ້ນໃຫ້ເຫັນເຖິງບົດບາດຂອງ ADB ໃນການສະໜັບສະໜູນ ແລະ ສົ່ງເສີມການລົງທຶນຈາກພາກເອກະຊົນ, ເສີມສ້າງແຫຼ່ງທຶນພາຍໃນປະເທດ ເພື່ອການພັດທະນາໃຫ້ຫຼາຍຂຶ້ນ. ແລະ ຂະຫຍາຍຂອບເຂດຂອງການເງິນເພື່ອການພັດທະນາໃຫ້ຫຼາຍຂຶ້ນ.

ໃນວາລະເປີດກອງປະຊຸມໃນຄັ້ງນີ້, ທ່ານ ມາສາໂຕະ ຄັນດະ (Masato Kanda), ປະທານ ADB ໄດ້ເນັ້ນໜັກ ກ່ຽວກັບຜົນກະທົບທີ່ເກີດຂຶ້ນຈາກສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ ແລະ ສິ່ງທ້າທາຍຕ່າງໆໃນປັດຈຸບັນ ແມ່ນສາມາດສົ່ງຜົນ ກະທົບແຜ່ລາມຢ່າງວ່ອງໄວ ແລະ ກວ້າງຂວາງ ໂດຍສະເພາະຕໍ່ຕະຫຼາດພະລັງງານ, ລະບົບຕ່ອງໂສ້ອຸປະທານ ຫຼື ເຄືອຂ່າຍດິຈິຕອນ ເຊິ່ງໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ບັນດາຊຸມຊົນທີ່ມີຂີດຄວາມສາມາດໃນການຮັບມືຕໍ່າສຸດ. ພ້ອມນີ້, ການແກ້ໄຂສິ່ງທ້າທາຍເຫຼົ່ານີ້ ຈຳເປັນຕ້ອງອາໄສກົນໄກການຮ່ວມມືໃນລະດັບພາກພື້ນທີ່ມີການປະສານງານກັນຢ່າງກົມກຽວ ແລະ ກວ້າງໄກກວ່າຂອບເຂດຊາຍແດນ ຂອງປະເທດໃດໜຶ່ງ. ໃນນີ້, ADB ກໍ່ມີແຜນຮັບມື ແລະ ຕອບສະໜອງຕໍ່ສະພາບການດັ່ງກ່າວ ດ້ວຍການເພີ່ມທະວີການລົງທຶນ ແລະ ເລັ່ງລັດການປະຕິຮູບ ເພື່ອຊ່ວຍໃຫ້ບັນດາປະເທດສະມາຊິກໃຫ້ສາມາດເຊື່ອມໂຍງດ້ານພື້ນຖານໂຄງລ່າງ, ຕະຫຼາດ ແລະ ສະຖາບັນຕ່າງໆ ເຂົ້າກັນໃນທົ່ວພາກພື້ນອາຊີ ແລະ ປາຊີຟິກ.





**ຂ່າວ-ພາບ: ກົມຮ່ວມມືສາກົນ**